ຮ່າງແຜນກິດຈະກຳການທ່ອງທ່ຽວແບບອະນຸລັກ 4 ແຂວງພາກໃຕ້ 2022-2024 ແລະ 2025-2027 ໂດຍຜັນຂະຫຍາຍແຜນງານພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ ຈຸດໝາຍປາຍທາງການທ່ອງທ່ຽວພາກໃຕ້ ຂອງ ສປປ ລາວ 2020-2025

ສະເໜີໂດຍ: ພະແນກການທ່ອງທ່ຽວແບບອະນຸລັກ ແລະ ບໍລິຫານ

ຈຸດປະສົງ

- ເພື່ອເຮັດໃຫ້ອັດຕາການຂະຫຍາຍຕົວດ້ານການທ່ອງທ່ຽວ ໂດຍສະເພາະແມ່ນການທ່ອງທ່ຽວແບບອະນຸລັກຢູ່ພາກໃຕ້ ຂອງ ສປປ ລາວ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງໃນຈັ່ງວະທີ່ມີລັກສະນະຍືນຍົງກວ່າທີ່ຜ່ານມາ.

- ເພື່ອເປັນການກະກຽມຄວາມພ້ອມໃຫ້ແກ່ການຮ່ວມມືລະຫວ່າງ ສປປ ລາວ ແລະ ລາຊາອານາຈັກກຳປູເຈຍ ໃນການພັດທະນາວົງຈອນການທ່ອງທ່ຽວແບບອະນຸລັກຂອງສອງປະເທດ.

- ສຸມໃສ່ວົງຈອນກາເຟເຂດພູພຽງບໍລິເວນ ເຊິ່ງກວມເອົາບາງພື້ນທີ່ຂອງ 4 ແຂວງພາກໃຕ້ ແລະ ເຂດປາກຊ່ອງ ຂອງ ແຂວງຈຳປາສັກ ໂດຍເອົາແຂວງຈຳປາສັກເປັນໃຈກາງຂອງການຮ່ວມມື ລາວ-ກຳປູເຈຍ ໃນການພັດທະນາວົງຈອນ ການທ່ອງທ່ຽວແບບອະນຸລັກ.

- ກອງປະຊຸມ ຄັ້ງທີ 1 ຕັ້ງເປົ້າວ່າ ຈະໄດ້ຮ່ວມກັນກຳນົດບັນດາກິດຈະກຳບູລິມະສິດຂອງການທ່ອງທ່ຽວແບບອະນຸລັກ 4 ແຂວງພາກໃຕ້ ເພື່ອເປັນແນວທາງໃຫ້ແກ່ການກຳນົດວຽກງານດັ່ງກ່າວໃນບາດກ້າວຕໍ່ໄປ.

ຄາດໝາຍສູ້ຊົນ

- ຄາດໝາຍທີ 5: ສູ້ຊົນພັດທະນາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຢູ່ພາກໃຕ້ໃຫ້ໄດ້ຈຳນວນ 1 ແຫ່ງຕໍ່ປີ. ຮອດປີ 2025, ສູ້ຊົນພັດທະນາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕາມມາດຕະຖານອາຊຽນ ແລະ ສປປ ລາວ ໃຫ້ໄດ້ຈຳນວນ 5 ແຫ່ງ.

- ຄາດໝາຍທີ 6: ສູ້ຊົນພັດທະນາເຮືອນພັກແຂມປະຊາຊົນຢູ່ພາກໃຕ້ໃຫ້ໄດ້ຈຳນວນ 1 ແຫ່ງຕໍ່ປີ. ຮອດປີ 2025, ສູ້ຊົນພັດທະນາເຮືອນພັກແຂມປະຊາຊົນຕາມມາດຕະຖານອາຊຽນ ແລະ ສປປ ລາວ ໃຫ້ໄດ້ຈຳນວນ 5 ແຫ່ງ.

- ຄາດໝາຍທີ 7: ສູ້ຊົນພັດທະນາຜະລິດຕະພັນຫນຶ່ງເມືອງຫນຶ່ງຜະລິດຕະພັນສຳລັບການທ່ອງທ່ຽວ ໃຫ້ໄດ້ຈຳນວນ 4 ຜະລິດຕະພັນພາຍໃນປີ 2025.

- ຄາດໝາຍທີ 15: ສູ້ຊົນປັບປຸງຂໍ້ມູນສະຖານທີ່ ແລະ ກິດຈະກຳທ່ອງທ່ຽວທາງອອນລາຍ ເປັນຕົ້ນແມ່ນ TripAdvisor ແລະ Google Maps ໃຫ້ກວມເອົາ 80% ຂອງຈຳນວນສະຖານທີ່ ແລະ ກິດຈະກຳທ່ອງທ່ຽວທັງຫມົດ.

- ຄາດໝາຍທີ 17: ສູ້ຊົນຈັດງານຢ້ຽມຢາມເສັ້ນທາງການທ່ອງທ່ຽວໃຫ້ແກ່ບໍລິສັດທ່ອງທ່ຽວ ແລະ ສື່ມວນຊົນຕ່າງປະເທດ.

- ຄາດໝາຍທີ 18: ສູ້ຊົນຜະລິດປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວທີ່ສຳຄັນຕາມກະແສນັກທ່ອງທ່ຽວໃຫ້ກວມຢ່າງຫນ້ອຍ 50% ຂອງຈຳນວນແຫຼ່ງທ່ອງທ່ຽວທັງຫມົດ.

- ຄາດໝາຍທີ 20: ສູ້ຊົນຜະລິດສື່ສິ່ງພິມໂຄສະນາເຊັ່ນ: ແຜ່ນພັບ ແລະ ແຜນທີ່ທ່ອງທ່ຽວໃຫ້ໄດ້ຈຳນວນ 3,000 ສະບັບຕໍ່ປີ.

- ຄາດໝາຍທີ 21: ສູ້ຊົນສ້າງແລະປັບປຸງນິຕິກຳ ແລະ ມາດຕະຖານໃນການຄຸ້ມຄອງການທ່ອງທ່ຽວ ໃຫ້ສອດຄ່ອງກັບມາດຕະຖານອາຊຽນ ແລະ ສປປ ລາວ

- ຄາດໝາຍທີ 24: ສູ້ຊົນຝຶກອົບຮົມຍົກລະດັບບຸກຄະລາກອນ ຂອງພາກທຸລະກິດໃນຂະແຫນງການທ່ອງທ່ຽວໃຫ້ໄດ້ 100 ຄົນ.

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການພັດທະນາການທ່ອງທ່ຽວ**
- **ການຕະຫຼາດການທ່ອງທ່ຽວ**
- **ການຄຸ້ມຄອງການທ່ອງທ່ຽວ**
- **ການພັດທະນາຊັບພະຍາກອນມະນຸດ**

ແຜນກິດຈະກຳການທ່ອງທ່ຽວແບບອະນຸລັກພາກໃຕ້ ຂອງ ສປປ ລາວ 2022-2024 ແລະ 2025-2027

asean

ມາດຕະຖານເຮືອນພັກແຂວງ ສປປ ລາວ
HOMESTAY STANDARD
Laos

SOUTHERN LAOS
Charming by nature

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການພັດທະນາການທ່ອງທ່ຽວ (4 ຍຸດທະສາດ)**

ຍຸດທະສາດທີ 2

ພັດທະນາຜະລິດຕະພັນການທ່ອງ ທ່ຽວຢູ່ພາກໃຕ້ຂອງລາວ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ

ແຜນງານທີ

2.1, 2.2, 2.3, 2.4, 2.5

ຍຸດທະສາດທີ 4

ເອົາໃຈໃສ່ປົກປັກຮັກສາສະພາບແວດລ້ອມ ເພື່ອຮັບປະກັນຄວາມຍືນຍົງຂອງການພັດທະນາການທ່ອງທ່ຽວ

ແຜນງານທີ

4.4

ຍຸດທະສາດທີ 5

ຮັບປະກັນຄວາມປອດໄພ ແລະ ການຮັກສາຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ

ແຜນງານທີ

5.1, 5.2, 5.3, 5.4, 5.5

ຍຸດທະສາດທີ 6

ພັດທະ ນາໂຄງລ່າງພື້ນຖານທີ່ຕິດພັນກັບການທ່ອງທ່ຽວ ເຮັດໃຫ້ນັກທ່ອງທ່ຽວສາມາດເຂົ້າເຖິງໄດ້ຢ່າງສະ ດວກ ສະບາຍ

ແຜນງານທີ

6.3, 6.4, 6.5, 6.6, 6.7, 6.8

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການພັດທະນາການທ່ອງທ່ຽວ (ຕໍ່)**

ຍຸດທະສາດທີ 2

ພັດທະນາຜະລິດຕະພັນການທ່ອງທ່ຽວຢູ່ພາກໃຕ້ຂອງລາວ ໃຫ້ສອດຄ່ອງກັບກະແສນັກທ່ອງທ່ຽວ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ

ແຜນງານທີ

2.1 ຈັດຕັ້ງປະຕິບັດມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ

2.2 ຈັດຕັ້ງປະຕິບັດມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຂອງ ສປປ ລາວ

2.3 ຈັດຕັ້ງປະຕິບັດມາດຕະຖານເຮືອນພັກແຂມປະຊາຊົນອາຊຽນ

2.4 ຈັດຕັ້ງປະຕິບັດມາດຕະຖານເຮືອນພັກແຂມປະຊາຊົນຂອງ ສປປ ລາວ

2.5 ພັດທະນາ ແລະ ສົ່ງເສີມຜະລິດຕະພັນຫນຶ່ງເມືອງຫນຶ່ງຜະລິດຕະພັນ (ODOP) ສຳລັບການທ່ອງທ່ຽວ

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການພັດທະນາການທ່ອງທ່ຽວ (ຕໍ່)**

ຍຸດທະສາດທີ 4

ເອົາໃຈໃສ່ປົກປັກຮັກສາສະພາບແວດລ້ອມ ເພື່ອຮັບປະກັນຄວາມຍືນຍົງຂອງການພັດ ທະນາການທ່ອງທ່ຽວ

ແຜນງານທີ

4.4 ປັບປຸງການບໍລິຫານຈັດການຂີ້ເຫຍື້ອຢູ່ພາກໃຕ້ຂອງລາວ

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການພັດທະນາການທ່ອງທ່ຽວ (ຕໍ່)**

ຍຸດທະສາດທີ 5

ຮັບປະກັນຄວາມປອດໄພ ແລະ ການຮັກສາຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ

ແຜນງານທີ

5.1 ສ້າງແຜນຮັກສາຄວາມປອດໄພ (Safety & Security Plan) ສຳລັບນັກທ່ອງທ່ຽວຢູ່ພາກໃຕ້ຂອງລາວ

5.2 ສ້າງລະບຽບການຄຸ້ມຄອງກິດຈະກຳທ່ອງທ່ຽວ ທີ່ມີຄວາມສ່ຽງຕໍ່ກັບຄວາມປອດໄພຂອງນັກທ່ອງທ່ຽວ

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການພັດທະນາການທ່ອງທ່ຽວ (ຕໍ່)**

ຍຸດທະສາດທີ 6

ພັດທະນາໂຄງລ່າງພື້ນຖານທີ່ຕິດພັນກັບການທ່ອງທ່ຽວ ເຮັດໃຫ້ນັກທ່ອງທ່ຽວສາມາດເຂົ້າເຖິງໄດ້ຢ່າງສະດວກສະບາຍ

ແຜນງານທີ

6.8 ປັບປຸງສິ່ງອຳນວຍຄວາມສະດວກໃນການເຂົ້າເຖິງສະຖານທີ່ທ່ອງທ່ຽວຕາມຈຸດເຊື່ອມຕໍ່

DENTIST ADVENTURE

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການຕະຫຼາດການທ່ອງທ່ຽວ (2 ຍຸດທະສາດ)**

- ຍຸດທະສາດທີ 10

ເພີ່ມທະວີການນຳໃຊ້ເຕັກໂນໂລຊີທັນສະໄໝເຂົ້າໃນການໂຄສະນາການທ່ອງທ່ຽວພາກໃຕ້ຂອງລາວ

- ແຜນງານທີ 10.5

ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps ໃຫ້ມີຄວາມຄົບຖ້ວນ ເຊັ່ນ: ສະຖານທີ່ທ່ອງທ່ຽວ, ເຮືອນພັກແຮມປະຊາຊົນ, ທີ່ຕັ້ງ, ເບີໂທຕິດຕໍ່, ຮູບພາບ ແລະ ອື່ນໆ

- ຍຸດທະສາດທີ 12

ເອົາໃຈໃສ່ຈັດກິດຈະກຳປະຊາສຳພັນການທ່ອງທ່ຽວພາກໃຕ້ຂອງລາວໃຫ້ສາມາດເຂົ້າເຖິງຕະຫລາດກຸ່ມເປົ້າໝາຍທັງພາຍໃນ ແລະ ຕ່າງປະເທດ

- ແຜນງານທີ 12.1

ຈັດງານຢ້ຽມຢາມເສັ້ນທາງການທ່ອງທ່ຽວ (FAM Trip) ໃຫ້ແກ່ບໍລິສັດທ່ອງທ່ຽວ

- ແຜນງານທີ 12.3

ຜະລິດວີດີໂອໂຄສະນາການທ່ອງທ່ຽວພາກໃຕ້ຂອງລາວ

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການຄຸ້ມຄອງການທ່ອງທ່ຽວ (1 ຍຸດທະສາດ)**

- ຍຸດທະສາດທີ 26:

ເອົາໃຈໃສ່ຄຸ້ມຄອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖານທີ່ແຫລ່ງທ່ອງທ່ຽວຕາມກະແສນັກທ່ອງທ່ຽວພາກໃຕ້ຂອງລາວ

- ແຜນງານທີ 26.1

ສ້າງແຜນບໍລິຫານຈັດການ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວ

- ແຜນງານທີ 26.3

ຍົກລະດັບຄວາມອາດສາມາດຂອງຜູ້ປະກອບການສະຖານທີ່ທ່ອງທ່ຽວກ່ຽວກັບການປະຖົມພະຍາບານເບື້ອງຕົ້ນ (First AID) ແລະ ການຮັກສາຄວາມປອດໄພຂອງນັກທ່ອງທ່ຽວໃນສະຖານທີ່ທ່ອງທ່ຽວ

ຍຸດທະສາດ ແລະ ແຜນງານ ພາຍໃຕ້ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ພາກໃຕ້ ຂອງ ສປປ ລາວ 2020-2025, **ທີ່ຕິດພັນກັບການທ່ອງທ່ຽວແບບອະນຸລັກ**

- **ການພັດທະນາຊັບພະຍາກອນມະນຸດ (1 ຍຸດທະສາດ)**

ຍຸດທະສາດທີ 38:

ເພີ່ມທະວີການຮ່ວມມືລະຫວ່າງພາກລັດ ແລະ ພາກທຸລະກິດໃນການພັດທະນາຊັບພະຍາກອນມະນຸດ

- ແຜນງານທີ 38.1

ສ້າງຄວາມເຂັ້ມແຂງໃຫ້ແກ່ຫນ່ວຍງານສະເພາະກິດ ການພັດທະນາຊັບພະຍາກອນມະນຸດໃນຂະແໜງການທ່ອງທ່ຽວພາກໃຕ້ຂອງລາວ

- ແຜນງານທີ 38.2

ເຜີຍແຜ່ຄວາມຄືບຫນ້າການຈັດຕັ້ງປະຕິບັດກິດຈະກຳ ແລະ ແຜນຈັດຕັ້ງປະຕິບັດກິດຈະກຳໃຫ້ແກ່ສະມາຊິກຫນ່ວຍງານສະເພາະກິດ

SOUTHERN LAOS
Charming by nature

ຈິບການສະເໜີພາບລອມ

ASEAN

ມາດຕະຖານເຮືອນພັກແຂວງ ສຫປ ລາວ
HOMESTAY STANDARD
Laos

ຮ່າງແຜນກິດຈະກຳການທ່ອງທ່ຽວແບບອະນຸລັກ 4 ແຂວງພາກໃຕ້ 2022-2024 ແລະ 2025-2027

ໂດຍຜັນຂະຫຍາຍແຜນງານພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ ຈຸດໝາຍປາຍທາງການທ່ອງທ່ຽວພາກໃຕ້ ຂອງ ສປປ ລາວ

2020-2025

ສະເໜີໂດຍ: ພະແນກການທ່ອງທ່ຽວແບບອະນຸລັກ ແລະ ບໍລິຫານ

SOUTHERN LAOS
Charming by nature

ຄຳເຫັນຂອງແຂວງຈຳປາສັກ

ການເພີ່ມເຕີມໃນແຕ່ລະດ້ານ:

- ດ້ານຍຸດທະສາດ: ບໍ່ມີ
- ດ້ານແຜນງານ: ບໍ່ມີ
- ດ້ານກິດຈະກຳ: ບໍ່ມີ
- ດ້ານພື້ນທີ່ເປົ້າໝາຍ:

- ບ້ານໃໝ່ສີງສຳພັນ ເມືອງຊະນະສົມບູນ (ປ່າສະຫງວນຊຽງທອງ ຍ່າງປ່າ ຊົມວິວແມ່ນ້ຳຂອງ ໂຮມສະເຕ ສິລາຈາລຶບ)
- ກຽດໂງ້ງ (ສຳຫຼວດຄືນເຂດພູອາສາ)
- ຕາດເຍືອງ ຕາດຟານ ດ່ານສີມໄຊ (ສຳຫຼວດຄືນ ຍ່າງປ່າ ຂີ່ສະລິງ)
- ບ້ານໜອງກອກ (ນ້ຳຕົກຕາດຈຳປີ ອາດຈະເຮັດເປັນບ່ອນຂີ່ເຮືອ)

ຄຳເຫັນຂອງແຂວງສາລະວັນ

ການເພີ່ມເຕີມໃນແຕ່ລະດ້ານ:

- ດ້ານຍຸດທະສາດ: ບໍ່ມີ
- ດ້ານແຜນງານ: ບໍ່ມີ, ແຕ່ສະເໜີເນັ້ນພື້ນທີ່ຮອບນອກຕື່ມ, ເພາະແຜນພັດທະນາຂອງ 4 ແຂວງພາກໃຕ້ແມ່ນກຳນົດໄວ້ ຮອບນອກ ແລະ ຮອບໃນ ເຊິ່ງກວມພື້ນທີ່ເປົ້າໝາຍທີ່ແຕກຕ່າງກັນ (ສະເໜີ ຖວທ ແຂວງສະໜອງຂໍ້ມູນຕື່ມ)
- ດ້ານກິດຈະກຳ: ບໍ່ມີ
- ດ້ານພື້ນທີ່ເປົ້າໝາຍ:

- ຕາດເລາະ ເປັນແຜນບູລິມະສິດ
- ເມືອງເລົ່າງາມ: ບ້ານຫ້ວຍຫູນ ບ້ານຄຽງຕາດສູງ ບ້ານສະນຶມໃນ ບ້ານທົ່ງສຸຍ ບ້ານພໍ່ເຂັມ ບ້ານມ່ວນແທ້
- ເມືອງສາລະວັນ: ບ້ານແສນວັງ ບ້ານປາກປ່ຽ ບ້ານຄຳທອງ
- ເມືອງລະຄອນເພັງ: ບ້ານທ່າຄັນຊຸມຊ໊ອ ບ້ານແບ່ງດ່ານ (ຫັດຖະກຳຈັກສານ)
- ເມືອງວາປີ: ບ້ານບັງຄານ້ຳ
- ເມືອງຕະໂອ້ຍ: ບ້ານທົ່ງຊະ (ແຫຼ່ງທ່ອງທ່ຽວທົ່ງກາ-ປ່າແປກ ເສັ້ນທາງໂຮ່ຈິມິນ) ບ້ານສັນຍາຍ່ອນ (ແຫຼ່ງທ່ອງທ່ຽວຖ້ຳເດ້ັ)
- ເມືອງສະໜ້ວຍ: ບ້ານຕະບົງແລງ (ແຫຼ່ງທ່ອງທ່ຽວຈຸດຊົມວິວທຳມະຊາດ-ປ່າສະຫງວນເຊຊັບ)
- ເມືອງຕຸ້ມລານ: ບ້ານບາກ (ຫັດຖະກຳຕ່ຳແຜ່ນ)

ຄຳເຫັນຂອງແຂວງເຊກອງ

ການເພີ່ມເຕີມໃນແຕ່ລະດ້ານ:

- ດ້ານຍຸດທະສາດ: ບໍ່ມີ
- ດ້ານແຜນງານ: ບໍ່ມີ
- ດ້ານກິດຈະກຳ: ບໍ່ມີ
- ດ້ານພື້ນທີ່ເປົ້າໝາຍ:

- ເມືອງທ່າແຕງ: ບ້ານກົກພຸງໃຕ້ (ໂຮມສະເຕຮຸກ, ຫ້ອງກາເຟ ແລະ ຊາ, ຢາກພັດທະນາ ຈຸດພັກແວ່ ແລະ ຫ້ອງນ້ຳ ສາທາລະນະ)
- ບ້ານກັນດອນ: (ການແບບອະນຸລັກປະຊາຊົນມີສ່ວນຮ່ວມ, ຜ່ານມາໄດ້ຮັບເງິນຊ່ວຍເຫຼືອ ADB ພັດທະນາເສັ້ນທາງ, ໄດ້ພັດທະນາໂຮມສະເຕ 10 ຫຼັງ, ແຂວງໃຫ້ງົບພັດທະນາສາລາຊຸມວິວບໍລິເວນດ້ານຫຼັງຂອງບ້ານ)
- ມີແຜນຈະຂະຫຍາຍໄປທາງ ຊາຍແດນດັກຈຶງ ແລະ ອັດຕະປື
- ຢາກໃຫ້ເນັ້ນໃສການພັດທະນາບຸກຄະລາກອນຂອງແຂວງຕື່ມ

ຄຳເຫັນຂອງແຂວງອັດຕະປື

ການເພີ່ມເຕີມໃນແຕ່ລະດ້ານ:

- ດ້ານຍຸດທະສາດ: ບໍ່ມີ
- ດ້ານແຜນງານ: ບໍ່ມີ
- ດ້ານກິດຈະກຳ: ບໍ່ມີ
- ດ້ານພື້ນທີ່ເປົ້າໝາຍ:

- ເມືອງສະໝາມໄຊ: ບ້ານໃໝ່ຫີນລາດ (ບໍລິເວນເຄື່ອນແຕກ)

- ໜອງຟ້າທົ່ງໄກ່ໂອກ (ນັກທ່ອງທ່ຽວພາຍໃນນິຍົມໄປທ່ຽວແບບຄອບຄົວ ເພາະເປັນເຂດພູສູງ: ຕັ້ງເຕັ້ນ ພັກຜ່ອນຢ່ອນອາລົມ, ຈະຈັດຕັ້ງເຮືອນພັກແຮມປະຊາຊົນ)

- ເສັ້ນທາງໂຮຈິມິນ ລູກສອນໄຟ (ຈະສຸມໃສ່ພັດທະນາການທ່ອງທ່ຽວກະສິກຳ: ກາເຟສານໄຊ, ໝາກພິກໄທ, ມີແຜນຈະສ້າງເປັນເຮືອນພັກແຮມປະຊາຊົນ, ບໍລິສັດທ່ອງທ່ຽວສູນທອນກຳລັງສະເໜີຂໍເຂົ້າໄປສຳປະທານ)

- ບ້ານລະຍາວ (ເຂດທ່ອງທ່ຽວບ້ານເຜົ່າ ເຜົ່າໂອ້ຍ)

- ບ້ານສະແຄ (ເຄີຍໄປຝຶກການສ້າງຕັ້ງໂຮມສະເຕ)

ທິດທາງ ແລະ ແຜນການຕໍ່ໜ້າ

- ພະແນກການທ່ອງທ່ຽວແບບອະນຸລັກ ແລະ ບໍລິຫານ ຈະໄດ້ຈັດສັມ ແລະ ບັນຈຸຄຳສະເໜີຂອງ ຖວທ 4 ແຂວງພາກໃຕ້: ດ້ານກິດຈະກຳ, ພື້ນທີ່ເປົ້າໝາຍ ແລະ ຕາຕະລາງເວລາຂອງກິດຈະກຳ ໃຫ້ສອດຄ່ອງກັບໄລຍະຂອງໂຄງການ ແລະ ຄວາມອາດສາມາດຕົວຈິງໃນການຈັດຕັ້ງປະຕິບັດ;
- ກອງປະຊຸມຮອບ 2 ເພື່ອຜ່ານຮ່າງແຜນກິດຈະກຳລະອຽດອີກເທື່ອໜຶ່ງ;
- ສະເໜີຮ່າງແຜນກິດຈະກຳທີ່ສົມບູນ ຕໍ່ຄະນະນຳຂອງກົມພັດທະນາການທ່ອງທ່ຽວ ແລະ ການນຳກະຊວງ ຖວທ ເພື່ອມີຄຳເຫັນ ແລະ ໃຫ້ທິດຊີ້ນຳ;
- ສະເໜີແຜນກິດຈະກຳການທ່ອງທ່ຽວແບບອະນຸລັກພາກໃຕ້ ຂອງ ສປປ ລາວ 2022-2024 ແລະ 2025-2027 ຕໍ່ບັນດາຜູ້ໃຫ້ທຶນ;

- ຮັບທຶນ
- ແຕ່ງຕັ້ງຄະນະກຳມະການຮັບຜິດຊອບຂອງສູນກາງ ແລະ ແຂວງ
- ຈັດຕັ້ງປະຕິບັດ